Goods & Prices Management

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ 0476 /ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 11 MAR 2009

## ຄໍາສັ່ງແນະນໍາ

ເຖິງ : ທ່ານຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ : ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ສິນຄ້າ-ລາຄາ.

- ອີງຕາມ ດໍາລັດ ສະບັບເລກທີ 207/ນຍ, ລົງວັນທີ 11/10/2001, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ
- ອີງຕາມ ຄໍາສັ່ງແນະນໍາ ສະບັບເລກທີ 334/ກຄ.ພນ, ລົງວັນທີ 22/03/2002, ວ່າດ້ວຍການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາສິນຄ້າ.
- ອີງຕາມ ເອກະສານຊີ້ນໍາຂອງຫ້ອງການກະຊວງ ອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 307/ຫອຄ, ລົງວັນທີ 04/02/2009 ກ່ຽວກັບ ຄໍາສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ຕໍ່ກອງປະຊຸມ ສະໄໝສາມັນເທື່ອທີ 06 ຂອງສະພາແຫ່ງຊາດ ຊຸດທີ VI ທີ່ຕິດພັນກັບວຽກງານ ຂອງຂະແໜງ ອຸດສາຫະກໍາ ແລະ ການຄ້າ.

ເພື່ອເພີ່ມທະວີຄວາມສັກສິດ ຂອງວຽກງານຄຸ້ມຄອງ ສິນຄ້າ-ລາຄາ ຢູ່ປະເທດເຮົາ ໃຫ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ, ທັງເຮັດໃຫ້ວຽກງານດັ່ງກ່າວເປັນລະບົບ ແລະ ເຂົ້າສູ່ລະບຽບການທີ່ລັດວາງອອກເທື່ອລະກ້າວ, ແນໃສ່ປົກປ້ອງ 03 ຜົນປະໂຫຍດໃຫ້ໄດ້ຮັບຜົນດີ ເຊັ່ນ : ຜູ້ປະກອບການ, ຜູ້ບໍລິໂພກ ແລະ ຜົນປະໂຫຍດຂອງລັດ. ເຮັດໃຫ້ສັງຄົມທົ່ວໄປໄດ້ຮັບຄວາມເປັນທໍາ ທາງດ້ານລາຄາ, ປະລິມານ ແລະ ຄຸນນະພາບ ຂອງສິນຄ້າ, ໂດຍສະເພາະແມ່ນສິນຄ້າ 30 ລາຍການທີ່ລັດຄຸ້ມຄອງ ເປັນຕົ້ນແມ່ນ : ນໍ້າມັນເຊື້ອໄຟ, ເຫຼັກ, ຊີມັງ, ເຂົ້າກິນ, ຊີ້ນ, ປາ... ແລະ ອີກດ້ານໜຶ່ງ ແມ່ນເພື່ອເປັນການຊຸກຍູ້ສົ່ງເສີມ ການຜະລິດພາຍໃນໃຫ້ມີການຂະຫຍາຍຕົວຂຶ້ນ ບົນພື້ນຖານຄວາມຖືກຕ້ອງຕາມລະບຽບຫຼັກການ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ບໍລິໂພກ ໃນການຮັບຮູ້ແຫຼ່ງຂໍ້ມູນຂອງສິນຄ້າ ໂດຍສະເພາະແມ່ນສິນຄ້າລັດຄຸ້ມຄອງ ທີ່ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ເຮັດໃຫ້ຕົວເລກລາຍຮັບຂອງລັດຊັດເຈນ ແລະ ໃກ້ຄຽງກັບຄວາມເປັນຈິງຍິ່ງຂຶ້ນ.

## ລັດຖະມົນຕີວ່າການ ກະຊວງອຸດສາຫະກໍາ ແລະ ການຄ້າ ອອກຄໍາສັ່ງດັ່ງນີ້ :

1- ໃຫ້ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງຕາມກໍລະນີທີ່ເຫັນວ່າເໝາະສົມ ພ້ອມກັນຄົ້ນຄວ້າ ຂໍທິດຊີ້ນໍາຈາກເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ໃນກໍລະນີທີ່ຈໍາເປັນເພື່ອຕິດຕາມ, ກວດກາ ແລະ ລົງເກັບກໍາຂໍ້ມູນ ສະພາບການຂອງສິນຄ້າ-ລາຄາ ຢ່າງໃກ້ຊິດ ແລະ ເປັນປະຈໍາ ເພື່ອກະຕຸກຊຸກຍູ້ຊາວຄ້າຂາຍໃຫ້ມີສະຕິ ແລະ ປະຕິບັດໃຫ້ສອດຄ່ອງກັບລະບຽບ ກົດໝາຍທີ່ ສປປ.ລາວ ໄດ້ກໍານົດໄວ້ໃນແຕ່ລະໄລຍະ.

2- ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ເອົາໃຈໃສ່ຢ່າງເຂັ້ມງວດ ໃນການປະສານສົມທົບ ແລະ ຊີ້ນຳຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ ໃນການໂຄສະນາເຜີຍແຜ່ ຂໍ້ມູນຂ່າວສານ ທີ່ກ່ຽວກັບວຽກງານຄຸ້ມຄອງສິນຄ້າ-ລາຄາ, ໂດຍການຕິດຕາມ, ກວດກາ ຢ່າງໃກ້ຊິດ ແລະ ເປັນປະຈຳຕໍ່ເນື່ອງ ດັ່ງນີ້ :

- ແນະນຳ, ເຜີຍແຜ່ ໃຫ້ແຕ່ລະຫ້າງ/ຮ້ານ, ຕົວແທນຈຳໜ່າຍສິນຄ້າ, ປ້ຳ... ຕິດປ້າຍລາຄາສິນຄ້າເປັນເງິນກີບ ແລະ ຖ້າຈະຕິດເປັນເງິນຕາຕ່າງປະເທດ ກໍແມ່ນໃນກໍລະນີ ຫ້າງ/ຮ້ານ ທີ່ໄດ້ຮັບອະນຸຍາດສະເພາະຈາກຂະແໜງການທີ່ກ່ຽວຂ້ອງ ຂອງລັດເທົ່ານັ້ນ.
- ໃຫ້ຕິດປ້າຍລາຄາສິນຄ້າທີ່ລັດຄຸ້ມຄອງ ແລະ ອະນຸຍາດໃຫ້ໃນແຕ່ລະຄັ້ງ ໄວ້ໜ້າຮ້ານ/ປ້ຳ ເຊັ່ນ : ນ້ຳມັນ ~~ເຊື້ອໄຟ, ຊີມັງ, ເຫຼັກ, ເຂົ້າກິນ, ຊີ້ນ, ປາ... ເພື່ອໃຫ້ຜູ້ບໍລິໂພກເຫັນໄດ້ງ່າຍ ແລະ ສະດວກໃນການຊື້/ຂາຍ.~~
- ການແນະນຳ ເຜີຍແຜ່ໃນແຕ່ລະຄັ້ງ ຕ້ອງໃຫ້ເຮັດເປັນລາຍລັກອັກສອນ ແລະ ລົງລາຍເຊັນກັນໄວ້ຄັກແນ່ລະຫວ່າງພະນັກງານຜູ້ຊີ້ນຳ ແລະ ເຈົ້າຂອງກິດຈະການ ເພື່ອຫຼີກເວັ້ນ ການບ່າຍບ່ຽງ ແລະ ໂຍນຄວາມຜິດໃສ່ກັນ ແລະ ກັນຄືທີ່ຜ່ານມາ.
- ຢູ່ຕາມທ້ອງຕະຫຼາດຕ່າງໆ, ຄວນສົມທົບ ແລະ ຊຸກຍູ້ໃຫ້ຈັດສັນຕະຫຼາດ ເປັນເຈົ້າການໃນການໂຄສະນາເຜີຍແຜ່ລະບຽບການຕ່າງໆ ຢ່າງໜ້ອຍ 2 ຄັ້ງ/ປີ ເພື່ອໃຫ້ຊາວຄ້າຂາຍເຂົ້າໃຈ ແລະ ຕື່ນຕົວປະຕິບັດຕາມລະບຽບກົດໝາຍ ຂອງບ້ານເມືອງທີ່ວາງອອກ, ພ້ອມກັນນັ້ນ ຈັດສັນຕະຫຼາດຕ້ອງເປັນເຈົ້າການ ໃຫ້ຄວາມຮ່ວມມືກັບພາກລັດໃນການກະຕຸກ ຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດຕົວຈິງໃຫ້ໄດ້ຮັບຜົນດີ.

3- ໃຫ້ເອົາລາຄາປະຈຳອາທິດ ໂດຍສະເພາະແມ່ນ 5 ແຂວງ( ຫຼວງພະບາງ, ນະຄອນຫຼວງວຽງຈັນ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ ) ຄືທີ່ເຄີຍປະຕິບັດຜ່ານມາ; ສ່ວນແຂວງອື່ນໆ ແມ່ນໃຫ້ເອົາລາຄາປະຈຳເດືອນ ເປັນການສົມທຽບລາຄາພາຍໃນແຂວງຂອງຕົນ (ສົມທຽບເມືອງຕໍ່ເມືອງ ຫຼື ຕະຫຼາດຫຼັກໆ ພາຍໃນແຂວງນັ້ນໆ) ຫຼັງຈາກລາຍງານຫາກະຊວງ ແລະ ແຕ່ລະພາກສ່ວນທີ່ກ່ຽວຂ້ອງຂອງແຂວງແລ້ວ, ໃຫ້ແຕ່ລະພະແນກ ອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການເຜີຍແຜ່ ໃຫ້ປະຊາຊົນໄດ້ຮັບຊາບ ບັນຫາທີ່ພົ້ນເດັ່ນຂອງສິນຄ້າ ແລະ ລາຄາຢູ່ໃນແຂວງຂອງຕົນ ຜ່ານທາງສື່ຕ່າງໆ ເຊັ່ນ : ວິທະຍຸ, ໜັງສືພິມ ຫຼື ໂທລະທັດ..., ຖ້າກໍລະນີມີສະພາບການຕ່າງໆ ກ່ຽວກັບລາຄາສິນຄ້າ ທີ່ບໍ່ເປັນໄປຕາມກົນໄກຕະຫຼາດ ກໍໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ເປັນເຈົ້າການໃນການຊອກຮູ້ສາເຫດຂອງສະພາບການດັ່ງກ່າວນັ້ນ ແລະ ຊີ້ແຈງຕໍ່ຂັ້ນເທິງ ແລະ ປະຊາຊົນ ເພື່ອຮັບຊາບ.

4- ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ເປັນເຈົ້າການ ແຈ້ງເບີໂທລະສັບຂອງພະແນກ ແລະ ເບີໂທລະສັບຂອງ ບັນດາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໃຫ້ກະຊວງ (ກົມການຄ້າພາຍໃນ) ແລະ ທົ່ວສັງຄົມໄດ້ຮັບຮູ້, ເພື່ອເປັນບ່ອນຮອງຮັບການແຈ້ງຂໍ້ມູນ ແລະ ເບາະແສຕ່າງໆ ທີ່ກ່ຽວກັບການຝ່າຝືນການປະຕິບັດລາຄາ, ກັກຕູນສິນຄ້າ, ມີສິນຄ້າປອມແປງ, ສິນຄ້າໝົດອາຍຸການນຳໃຊ້, ສິນຄ້າເຊື່ອມຄຸນ ແລະ ອື່ນໆ ເພື່ອຮັບຮູ້ ແລະແກ້ໄຂໃຫ້ທັນກັບສະພາບການ.

5- ຖ້າພົບເຫັນບຸກຄົນ ຫຼື ຫົວໜ່ວຍທຸລະກິດໃດຝ່າຝືນ ບໍ່ປະຕິບັດຕາມຄຳສັ່ງສະບັບນີ້ ໃຫ້ໃຊ້ມາດຕະການຕໍ່ຜູ້ລະເມີດດັ່ງກ່າວ ບົນພື້ນຖານສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ.ລາວວາງອອກຢ່າງເຂັ້ມງວດ.

6- ມາດຕະການຕໍ່ຜູ້ລະເມີດ ຕໍ່ການສວຍໂອກາດ ກັກຕູນ, ຂຶ້ນລາຄາສິນຄ້າ ແລະ ມາດຕາວັດແທກຊັ່ງຜອງ ຈະຖືກປະຕິບັດດັ່ງນີ້ :

- **ຄັ້ງທີໜຶ່ງ** : ແມ່ນໃຫ້ຕັກເຕືອນ ພ້ອມທັງເຮັດບັນທຶກຮັບຮູ້ຄວາມຜິດໄວ້.
- **ຄັ້ງທີສອງ** : ແມ່ນໃຫ້ປະຕິບັດມາດຕະການ ທີ່ລະບຸໄວ້ໃນກົດໝາຍອາຍາ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 20 ພະຈິກ 2005, ໃນໝວດທີ 7, ມາດຕາ 147, 148 ແລະ 150 ຕາມແຕ່ລະກໍລະນີທີ່ເຫັນວ່າເໝາະສົມ.

7- ຖ້າການລະເມີດຫາກເກີດຂຶ້ນຈາກພະນັກງານລັດຜູ້ໃດຜູ້ໜຶ່ງ,ໂດຍການກະທຳທີ່ບົກຜ່ອງ ຫຼື ນຳພາໄປໃນທາງທີ່ຜິດ ແມ່ນໃຫ້ປະຕິບັດວິໄນຕໍ່ບຸກຄົນດັ່ງກ່າວຢ່າງເຂັ້ມງວດ ຕາມທີ່ລະບຸໄວ້ໃນກົດໝາຍອາຍາ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 20 ພະຈິກ 2005, ໃນໝວດທີ 8 ຕາມແຕ່ລະກໍລະນີທີ່ເຫັນວ່າເໝາະສົມ.

8- ໃຫ້ລາຍງານ ຜົນການຈັດຕັ້ງປະຕິບັດໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ຊາບ ໃນເວລາອັນຄວນ.

9- ຄຳສັ່ງແນະນຳສະສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະການຄ້າ,

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ດຣ. ນາມ ວິຍະເກດ

<u>ສຳເນົາສົ່ງ</u> :

- ລັດຖະມົນຕີຊ່ວຍວ່າການ ກະຊວງ ອຄ 02 ສະບັບ " ເພື່ອຊາບ "
- ຫົວໜ້າຫ້ອງການ ກະຊວງ ອຄ " ເພື່ອຊາບ "
- ກົມການຄ້າພາຍໃນ " ເພື່ອຕິດຕາມ ແລະ ກວດກາ "
- ສຳເນົາ